ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື ເລກທີ 1062/ຈຂ.ອປ

ອັດຕະປື, ວັນທີ 25 ຕຸລາ 2016

# ມະຕິ

## ກອງປະຊຸມອົງການປົກຄອງແຂວງຄັ້ງທີ 1 ຊຸດທີ I

ກອງປະຊຸມອົງການປົກຄອງແຂວງຄັ້ງທີ 1 ຊຸດທີ I ໄດ້ດຳເນີນເປັນເວລາ 1 ວັນເຄິ່ງ (ວັນທີ 19-20 ຕຸລາ 2016) ຢູ່ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງ, ພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ເຈົ້າແຂວງອັດຕະປື; ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າກອງບັນຊາການ ປກຊ-ປກສ ແລະ ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການໃນຄະນະອົງການປົກຄອງແຂວງ, ທ່ານເຈົ້າເມືອງ-ຮອງເຈົ້າເມືອງ ຈາກ 5 ເມືອງ ແລະ ພາກສ່ວນຕ່າງໆ ເຂົ້າຮ່ວມທັງໝົດ 48 ທ່ານ, ຍິງ 5 ທ່ານ.

ຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນເປັນເອກະພາບກັນຕໍ່ເນື້ອໃນບົດສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງແຂວງ, ການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2015-2016 ແລະ ທິດທາງແຜນການປີ 2017, ການຈັດຕັ້ງປະຕິບັດແຜນງົບປະມານ ສົກປີ 2015-2016, ແຜນງົບປະມານຂ້າມຜ່ານໄລຍະ 3 ເດືອນທ້າຍປີ 2016 ແລະ ທິດທາງແຜນການງົບປະມານ ປີ 2017, ການຈັດຕັ້ງປະຕິບັດວຽກງານຈັດສັນທີ່ດິນ ແລະ ຄາດຄະເນລາຍຮັບຈາກທີ່ດິນ, ການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ, ການຈັດຕັ້ງປະຕິບັດວຽກງານສາມສ້າງ ແລະ ຄຳສັ່ງເລກທີ 34/ນຍ, ການຈັດຕັ້ງປະຕິບັດກ່ຽວກັບ 3 ວາລະໃຫຍ່ຂອງແຂວງຄື: 1. ແຮງງານຜິດກົດໝາຍ, 2. ຄົນເຂົ້າ-ອອກເມືອງຜິດກົດໝາຍ, 3. ຢາເສບຕິດ ແລະ ການແກ້ໄຂປະກົດການຫຍໍ້ທໍ້ດ້ານຕ່າງໆ, ການແກ້ໄຂການລັກລອບຂຸດພະຍາກອນທຳມະຊາດ ( ໄມ້, ຄຳ ແລະ ອື່ນໆ ) ພາຍໃນແຂວງ.

ຜ່ານການຕີລາຄາບົນພື້ນຖານຄວາມເປັນຈິງ ສາມາດຕີລາຄາໄດ້ວ່າ: ພາຍໃຕ້ການຊີ້ນຳ-ນຳພາຢ່າງມີຫົວຄິດປະດິດສ້າງ, ມີຄວາມສະດຸ້ງໄວຕໍ່ສະພາບການ ໂດຍແມ່ນຄະນະປົກຄອງແຂວງ ເປັນຫົວຈັກຫຼັກແຫຼ່ງຕັດສິນ ແລະ ເປັນເຈົ້າການນຳພາທຸກວຽກງານປົ່ນອ້ອມ, ບວກກັບເງື່ອນໄຂກາລະໂອກາດເອື້ອອຳນວຍ ເຮັດໃຫ້ທົ່ວແຂວງສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ ຍັງສືບຕໍ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ, ວຽກງານທຸກດ້ານຂອງອົງການປົກຄອງແຂວງ ໃນທຸກຂົງເຂດວຽກງານໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ, ເສດຖະກິດມວນລວມຂອງແຂວງຍັງສືບຕໍ່ຂະຫຍາຍຕົວ ໃນລະດັບ 6,26%, ປະກົດການຫຍໍ້ທໍ້ດ້ານຕ່າງໆໄດ້ຮັບການແກ້ໄຂຢ່າງຕໍ່ເນື່ອງ ແລະ ບາງດ້ານ ສາມາດຢຸດຕິໄດ້ເກືອບ 100% ແລະ ມີຄວາມສະຫງົບ ດີຂຶ້ນກວ່າຊຸມປີຜ່ານມາ.

ເພື່ອຮັບປະກັນການເຄື່ອນໄຫວການຊີ້ນຳ-ນຳພາ ຂອງຄະນະອົງການປົກຄອງແຂວງ ແຕ່ນີ້ຮອດທ້າຍປີ 2016 ແລະ ທິດທາງແຜນການ ປີ 2017 ໂດຍຮັບຮອງເອົາວຽກງານຈຸດສຸມຈຳນວນໜຶ່ງ ດັ່ງນີ້:

➢ ແຜນຈຸດສຸມ 3 ເດືອນທ້າຍປີ 2016 ດັ່ງນີ້:

1. ສືບຕໍ່ປຸກລະດົມປະຊາຊົນ ເກັບກ່ຽວຜົນຜະລິດນາປີ, ກະກຽມຊຸກຍູ້ການຜະລິດເຂົ້ານາແຊງ ແລະ ພືດລະດູແລ້ງໃນເຂດພື້ນທີ່ຊົນລະປະທານ ໃຫ້ເປັນຂະບວນການ ແລະ ເປັນສິນຄ້າ.
2. ບັນດາແຜນການໂຄງການລົງທຶນຂອງລັດ ແລະ ຮ່າງງົບປະມານຂອງບັນດາພະແນກການປີ 2017 ມອບໃຫ້ພະແນກແຜນການ-ການລົງທຶນ ແລະ ພະແນກການເງິນແຂວງ ປັບປຸງແລ້ວນຳສະເໜີຕໍ່ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ກ່ອນນຳສະເໜີຕໍ່ກອງປະຊຸມສະພາຂອງແຂວງ.
3. ສືບຕໍ່ຈັດຕັ້ງປະຕິບັດ 3 ວາລະໃຫຍ່ຂອງແຂວງ: ໂດຍສະເພາະ ແມ່ນສືບຕໍ່ແກ້ໄຂບັນຫາຢາເສບຕິດ ແລະ ບັນຫາແຮງງານເຂົ້າ-ອອກເມືອງ, ຜູ້ປະກອບອາຊີບຜິດກົດໝາຍ ໃຫ້ມີຂໍ້ສະຫຼຸບຢ່າງຈະແຈ້ງ; ເດັດຂາດຫ້າມບໍ່ໃຫ້ທຸກພາກສ່ວນຂະແໜງການຂອງລັດ ອອກໃບອະນຸຍາດອີກຕໍ່ໄປ.
4. ສູ້ຊົນເກັບລາຍຮັບພາຍໃນເຂົ້າງົບປະມານໃນໄລຍະ 3 ເດືອນຂ້າມຜ່ານ ທ້າຍປີ 2016 ໃຫ້ໄດ້ຕາມແຜນການ 33,183 ຕື້ກີບ ແລະ ຄຸ້ມຄອງລາຍຈ່າຍ ບໍ່ໃຫ້ເກີນແຜນວາງໄວ້ໃນເບື້ອງຕົ້ນ 53,835 ຕື້ກີບ.
5. ສືບຕໍ່ປັບປຸງ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-2020) ແລະ ແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ 5 ປີ (2016-2020) ໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ໂດຍສອດຄ່ອງກັບສະພາບເງື່ອນໄຂຕົວຈິງ; ໃນນີ້ ບັນດາຄາດໝາຍສູ້ຊົນທີ່ຈະຕ້ອງປັບປຸງໃໝ່ນັ້ນ ໃຫ້ເອົາຜ່ານກອງປະຊຸມອົງການປົກຄອງແຂວງ ເດືອນ 11 ປີ 2016. ໃຫ້ສົມທົບກັບບັນດາເມືອງທົບທວນຄືນຈຸດສຸມຂອງເມືອງໃຫ້ສຳເລັດໃນເດືອນ 12 ປີ 2016, ເມືອງຕ້ອງໄດ້ທົບທວນມະຕິ ແລະ ແຜນພັດທະນາຂອງຕົນໃຫ້ສອດຄ່ອງກັບມະຕິ X ຂອງພັກ ແລະ ອົງຄະນະພັກແຂວງ ໃຫ້ສຳເລັດໃນເດືອນ 12 ປີ 2016.
6. ມອບໃຫ້ ຫ້ອງວ່າການແຂວງສືບຕໍ່ປະສານງານ ແລະ ປັບປຸງຮ່າງແຜນດຳເນີນງານຂອງອົງການປົກຄອງແຂວງ ໃຫ້ສຳເລັດໃນເດືອນ 12 ປີ 2016.
7. ມອບໃຫ້ພະແນກການຕ່າງປະເທດແຂວງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາຄືນແຜນຮ່ວມມື ແລະ ບັນທຶກສັນຍາກັບບັນດາແຂວງທີ່ມີການພົວພັນກັນແລ້ວ, ເຮັດເປັນວາລະໝົດປີນັບແຕ່ເດືອນ 11 ປີ 2016 ແລະ ປີ 2017 ເພື່ອສະເໜີຕໍ່ກອງປະຊຸມພິຈາລະນາຕົກລົງ ແລະ ມີທິດໃນການເສີມຂະຫຍາຍການຮ່ວມມື ໃຫ້ມີປະສິດທິຜົນກວ່າເກົ່າ.
8. ສ້າງ ແລະ ດຳເນີນກົນໄກປະສານງານຂອງ 4 ເສົາຄ້ຳ ເຊັ່ນ: ອົງການລັດບໍລິຫານ, ຜູ້ສະໜອງແຫຼ່ງທຶນ, ຜູ້ທຳການຜະລິດ ແລະ ການຕະຫຼາດ ເພື່ອຂັບເຄື່ອນການຜະລິດກະສິກຳເປັນສິນຄ້າ ໃຫ້ເປັນຮູບປະທຳ ຕາມເງື່ອນໄຂ, ທ່າແຮງທີ່ບົ່ມຊ້ອນຕົວຈິງຂອງເຂດແຄວ້ນຂອງແຂວງ ທັງນີ້ກໍ່ເພື່ອເຮັດໃຫ້ປະຊາຊົນມີອາຊີບແນ່ນອນໝັ້ນຄົງ ແລະ ສ້າງແຫຼ່ງລາຍຮັບໃຫ້ແກ່ງົບປະມານທີ່ແນ່ນອນ. ໃຫ້ຄະນະດັ່ງກ່າວຮ່າງໂຄງການດຳເນີນຂອງຕົນ ລາຍງານຕໍ່ກອງປະຊຸມອົງການປົກຄອງແຂວງ ເດືອນ 11 ປີ 2016.

➢ ແຜນວຽກຈຸດສຸມປີ 2017 ດັ່ງນີ້:

1. ສືບຕໍ່ຮັກສາສະຖຽນລະພາບທາງດ້ານການເມືອງ ໃຫ້ມີຄວາມໜັກແໜ້ນ; ເຮັດໃຫ້ສະພາບຊາຍແດນ, ຈຸດຫຼໍ່ແຫຼມຕ່າງໆ ແລະ ສະພາບສັງຄົມພາຍໃນແຂວງ ໃຫ້ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ; ໃນນີ້ເອົາໃຈໃສ່ຢ່າງແຂງແຮງໃນການແກ້ໄຂປະກົດການຫຍໍ້ທໍ້ ຕາມ 3 ວາລະໃຫ່ຍຂອງແຂວງ ໃຫ້ດີຂຶ້ນກວ່າເກົ່າເພື່ອເປັນສິ່ງເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມພາຍໃນແຂວງ ໃນຊຸມປີຕໍ່ໜ້າ.
2. ສືບຕໍ່ກວດກາ ການເກັບກໍາການປະກອບອາຊີບ ແລະ ຈັບຈອງ ຊື້-ຂາຍດິນ ຂອງຄົນຕ່າງດ້າວ, ຕ່າງປະເທດນໍາປະຊາຊົນໃຫ້ເຂົ້າສູ່ລະບຽບກົດໝາຍ.
3. ສຸມໃສ່ສືບຕໍ່ການຈັດຕັ້ງປະຕິບັດວຽກງານການຈັດສັນທີ່ດິນຄືນໃໝ່ໃຫ້ແກ່ປະຊາຊົນ 5 ເມືອງທົ່ວແຂວງ ໃຫ້ສໍາເລັດໃນເດືອນ 3 ປີ 2017, ພ້ອມທັງຄົ້ນຄວ້າຄໍາແນະນໍາລະບຽບການ ຫຼື ວິທີການຈັດຕັ້ງປະຕິບັດຕ່າງໆ ໃຫ້ຊັດເຈນ, ແຈ້ງໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈໃນການຈັດຕັ້ງປະຕິບັດ; ມອບໃຫ້ອໍານາດການປົກຄອງເມືອງ 5 ເມືອງເປັນໃຈກາງປະສານກັບປະຊາຊົນ ເພື່ອໃຫ້ເຂົາເຈົ້າຮ່ວມມືຈັດຕັ້ງປະຕິບັດໃຫ້ສໍາເລັດຕາມແຜນທີ່ວາງໄວ້. ທັງໝົດເຫຼົ່ານີ້ກໍ່ເພື່ອຈັດສັນມອບດິນ-ມອບປ່າ ໃຫ້ປະຊາຊົນປະກອບອາຊີບທີ່ໝັ້ນຄົງ ແລະ ການເກັບອາກອນຕ່າງໆຈາກທີ່ດິນໃຫ້ໄດ້ຕາມແຜນການ.
4. ສືບຕໍ່ປັບປຸງກົນໄກການປະສານງານ ແລະ ແບ່ງຂັ້ນຄຸ້ມຄອງຕາມທິດສາມສ້າງ ໂດຍປະຕິບັດຕາມຄໍາສັ່ງ ເລກທີ 34/ນຍ, ສືບຕໍ່ປັບປຸງຊັບຊ້ອນພະນັກງານ ແລະ ມອບໂອນບັນດາຂະແໜງການໃຫ້ສໍາເລັດໂດຍໄວ, ມອບໃຫ້ພະແນກ ພາຍໃນແຂວງ ຄົ້ນຄວ້ານິຕິກໍາທີ່ຈໍາເປັນ ທັນລົງເຜີຍແຜ່ແນະນໍາ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີຜົນສໍາເລັດ.
5. ສືບຕໍ່ປະຕິບັດຄໍາສັ່ງເລກທີ 15/ນຍ; ໃນນີ້ວຽກຕົ້ນຕໍແມ່ນປະມູນຂາຍໄມ້ຕາມທິດຂອງຂັ້ນເທິງ ແລະ ຕັດສົມບັນດາໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ຕາມທິດຊີ້ນໍາຂອງລັດຖະບານ.

ໃນກອງປະຊຸມເດືອນຕໍ່ໄປ ມອບໃຫ້ຫ້ອງວ່າການແຂວງດັດແກ້ຫົວຂໍ້ ເພື່ອພິຈາລະນາ ໂດຍສົມທົບກັບສະພາແຂວງ ເພື່ອກໍານົດເບິ່ງຂໍ້ຂ້ອງໃຈ ຫຼື ຂໍ້ສະເໜີຂອງປະຊາຊົນ ກ່ອນນໍາໄປຊີ້ແຈງຢູ່ໃນກອງປະຊຸມສະພາ.

ກອງປະຊຸມອົງການລັດຂັ້ນແຂວງຄັ້ງທີ 1 ຊຸດທີ I ໄດ້ດໍາເນີນມາຮອດເວລາ 11:30 ໂມງ ຂອງວັນທີ 20 ຕຸລາປີ 2016 ກອງປະຊຸມກໍ່ໄດ້ປິດລົງຢ່າງເປັນທາງການດ້ວຍຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຄະນະອົງການປົກຄອງແຂວງ

ເຈົ້າແຂວງ

ດຣ.ນາມ ວິຍະເກດ